ສານປະຊາຊົນ
ແຂວງຫລວງພະບາງ
ຂາເຂົ້າ ເລກທີ່...148...........
ວັນທີ...10...8...2016

# ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ເມືອງຫລວງພະບາງ ເລກທີ...298.../ຍທຂ-ມຫຼບ

ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ຫລວງພະບາງ, ວັນທີ...27.../.....7..../ 2016

## ບົດລາຍງານ

**ເລື່ອງ:** ການລົງກວດກາສິ່ງປຸກສ້າງຢູ່ບ້ານ ສັງຄະໂລກ ,ເມືອງ ແລະ ແຂວງ ຫຼວງພະບາງ.

- ອີງຕາມ ໃບສະເໜີຂອງສານປະຊາຊົນແຂວງຫຼວງພະບາງ ເລື່ອງຂໍວິຊາການລົງກວດກາ ປະເມີນລາຄາສິ່ງປຸກສ້າງຢູ່ ບ້ານ ສັງຄະໂລກ,ເມືອງ ແລະ ແຂວງ ຫຼວງພະບາງ,ສະບັບເລກທີ 047/ສປຊ,ລົງວັນທີ 22/7/2016.
- ອີງຕາມ ການລົງກວດກາສະຖານທີ່ຕົວຈິງຂອງວິຊາການຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງຫຼວງພະບາງ ໃນຄັ້ງວັນທີ 26/7/2016.

ໃນນາມຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງຫຼວງພະບາງ ຂໍລາຍງານການລົງກວດກາສະຖານທີ່ຕົວຈິງ ຕາມການສະເໜີຂອງສານປະຊາຊົນແຂວງຫຼວງພະບາງໃນຄັ້ງວັນທີ 26/7/2016 ເວລາ 10:00 ໂມງ ເຫັນວ່າໃນ ຕອນດິນດັ່ງກ່າວໄດ້ມີການປຸກສ້າງເຮືອນຈຳນວນ 1 ຫຼັງ ເຊິ່ງມີລາຍລະອຽດດັ່ງນີ້:

1. ເຮືອນຂອງນາງ ບຸນທັນ ຈັດເປັນປະເພດເຮືອນ ທັນສະໄໝ ເປັນເຮືອນກໍ່ 2 ຊັ້ນ ,ໂຄງສ້າງ ເບຕົງເສີມ ເຫຼັກ ພື້ນຕິດກະໂລ, ມຸງດ້ວຍຊີແພັກໂມເນ່ຍ, ປຸກສ້າງສຳເລັດ 80 % ມີຂາດເຕົ້າເຮືອນ 10 m x 18,5 m , ເນື້ອທີ່ຕິດໜ້າດິນ 160 ຕາແມັດ, ລວມເນື້ອທີ່ທັງໝົດ2 ຊັ້ນແມ່ນ 320 ຕາແມັດ.

- ອັດຕາການຄິດໄລ່ມູນຄ່າການກໍ່ສ້າງຕາມທີ່ກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ກຳນົດລາຄາການກໍ່ສ້າງ ເຮືອນແຕ່ລະປະເພດ(ກໍ່ສ້າງໃໝ່ໃນປະຈຸບັນ) ເຮືອນພັກຄອບຄົວແມ່ນ 3,118,000 ກີບ/ຕາແມັດ, ການກໍ່ສ້າງດັ່ງກ່າວແມ່ນສຳເລັດ 80%ຄິດເປັນເງິນທັງໝົດ 798,208,000 ກີບ **(ຂຽນເປັນໜັງສື : ເຈັດຮ້ອຍເກົ້າສິບແປດລ້ານ ສອງແສນ ແປດພັນກີບ).**

ດັ່ງນັ້ນຈຶ່ງລາຍງານມາຍັງສານ ເພື່ອເປັນບ່ອນອີງໃຫ້ແກ່ການຄົ້ນຄ້ວາ ໃນການຈັດຕັ້ງປະຕິບັດໃນຂັ້ນຕໍ່ໄປ.

ຫົວໜ້າຫ້ອງການ ຍທຂ ເມືອງຫຼວງພະບາງ — ວິຊາການ

ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງຫລວງພະບາງ

ບຸນເພັງ ຈິດຕະພອນ
Bounpheng CHITTAPHONE

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສານປະຊາຊົນ ແຂວງຫລວງພະບາງ
ເລກທີ 146
ລົງວັນທີ 10.8.2016

ແຂວງຫຼວງພະບາງ
ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ເລກທີ 1545/ພຊສ.ຫຼບ
ລົງວັນທີ 09 AUG 2016

# ບົດລາຍງານ

ຮຽນ: ທ່ານປະທານ ສານປະຊາຊົນ ແຂວງຫຼວງພະບາງ ທີ່ນັບຖື.
ເລື່ອງ: ການປະເມີນລາຄາກ່ຽວກັບທີ່ດິນ ຂອງ ນາງ ບຸນທັນ ລັກປະສິດ.

- ອີງຕາມ: ກົດໝາຍ ວ່າດ້ວຍທີ່ດິນ ເລກທີ 04 / ສພຊ, ລົງວັນທີ 21 / 10 / 2003.
- ອີງຕາມ: ຂໍ້ຕົກລົງຂອງລັດຖະມົນຕີ ວ່າການກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 1467/ກຊສ ລົງວັນທີ09/03/2012 ວ່າດ້ວຍຈັດຕັ້ງ ແລະ ເຄື່ອນໄຫວຂອງພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ.
- ອີງຕາມ: ໃບສະເໜີຂອງ ສານປະຊາຊົນ ແຂວງຫຼວງພະບາງ ເລກທີ 047/ສປຊ, ລົງວັນທີ 22/07/2016.

ເພື່ອເຮັດໃຫ້ວຽກງານດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດ, ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂໍຖື ເປັນກຽດຮຽນລາຍງານມາຍັງທ່ານປະທານ ສານປະຊາຊົນ ແຂວງຫຼວງພະບາງ, ໃນຄັ້ງວັນທີ 26 /07/ 2016, ວິຊາການຂອງ ຂະ ແໜງ ຄຸ້ມຄອງທີ່ດິນ ໄດ້ລົງກວດທີ່ດິນຂອງ ນາງ ບຸນທັນ ລັກປະສິດ ຊຶ່ງຕັ້ງຢູ່ ບ້ານ ສັງຄະໂລກ ເມືອງ ຫຼວງພະບາງ ແຂວງ ຫຼວງ ພະບາງ ຕາມໃບສະເໜີຂອງ ສານປະຊາຊົນ ແຂວງຫຼວງພະບາງ ເລກທີ 047/ສປຊ, ລົງວັນທີ 22/07/2016 ເຫັນວ່າ:

1. ອີງຕາມໃບທະບຽນທີ່ດິນ ເລກທີ 425 ໃບທີ 25 ລົງວັນທີ 10/02/2015 ແຜນທີ່ດິນໃບທີ C196-193/03 ຕອນດິນ ເລກທີ 102 ມີເນື້ອທີ່ 372 ຕາແມັດ, ອອກຊື່ ນາງ ບຸນທັນ ລັກປະສິດ ຊຶ່ງຕັ້ງຢູ່ໜ່ວຍ 12, ບ້ານ ສັງຄະໂລກ ເມືອງຫຼວງພະບາງ, ແຂວງຫຼວງພະບາງ.

   - ອີງຕາມເຂດປະເມີນ A9 ປະເພດ 3 ມີລາຄາປະເມີນ 270.000 ກີບ/1ຕາແມັດ.
     ເນື້ອທີ່ 372 ຕາແມັດ x 270.000 = 100.440.000 ກີບ. (ໜຶ່ງຮ້ອຍລ້ານສີ່ແສນສີ່ສິບພັນກີບ).

ດັ່ງນັ້ນ; ຈຶ່ງຮຽນລາຍງານມາຍັງທ່ານປະທານ ສານປະຊາຊົນ ແຂວງຫຼວງພະບາງ ເພື່ອຊາບ.

**ຫົວໜ້າພະແນກ**
**ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

ພະແນກ ຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ ແຂວງຫລວງພະບາງ

**ຈັນທະວົງ ພົນນະຈິດ**
**Chanthavong PHONNACHIT**